神奈川県
KANAGAWA

# ແນວທາງສົ່ງເສີມປະຕິບັດ ນະໂຍບາຍສາກົນຂອງແຂວງ ຄານາກາວາ

ສະບັບຫຍໍ້

ສະບັບທີ5

ການກາຍເປັນຈິງຂອງສັງຄົມຮ່ວມກັນທີ່ມີວັດທະນະທຳຫລາກຫລາຍແບບສັນຕິພາບໂດຍການຮ່ວມມືແລະການຕິດຕໍ່ຮ່ວມມືກັນຢ່າງກ້ວາງຂວາງ

ການແຜ່ຂະຫຍາຍອອກໄປຂອງຍຸດທະສາດລະດັບໂລກທີ່ໃຊ້ຈຸດດີຂອງຄານາກາວາ


ແຂວງຄານາກາວາ

ພະແນກສາກົນ ກົມວັດທະນະທຳ,ກິລາແລະການທ່ອງທ່ຽວ

〒231-8588 ໂຢໂກຮາມາ-ຊິ, ໜ້າກາ-ກຶ, ນິໂຮນ-ໂອໂດລິ 1

ໝາຍເລກໂທລະສັບ (045)210-3748 （ໂດຍກົງ)

ໝາຍເລກແຟັກ (045)212-2753



CLAIR
一般財団法人
自治体国際化協会

ໂດຍໄດ້ຮັບການສະໜັບສະໜູນຈາກນິຕິບຸກຄົນມູນນິທິທົ່ວໄປສະມາຄົມສາກົນອຳນາດການປົກຄອງທ້ອງຖິ່ນ, ພວກເຮົາໄດ້ສ້າງແຜ່ນພັບສະບັບນີ້.

# 1 ຈຸດປະສົງຂອງແນວທາງ/ເນື້ອໃນຂອງການປັບປຸງ

ໃນສະຖານະການເລັ່ງໂລກະພິວັດຂອງສັງຄົມ -ເສດຖະກິດ ແລະ ການຫັນເປັນບໍ່ມີພົມແດນ ໄປເລື້ອຍໆ , ຄວາມສຳພັນລະຫວ່າງປະເທດກັບປະເທດ, ພາກພື້ນກັບພາກພື້ນ, ຄົນກັບຄົນ ເລິກເຊິ່ງຂຶ້ນເລື້ອຍໆ, ແນວທາງນີ້ຊີ້ໃຫ້ເຫັນແນວຄິດແລະທິດທາງຂອງແຂວງໃນການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບາຍສາກົນຈາກມຸມມອງຂອງຜູ້ກ່ຽວເອງ, ບໍ່ວ່າສັນຊາດໃດກໍຕາມ ເພື່ອພົນລະເມືອງຂອງແຂວງພວກເຮົາທຸກຄົນສາມາດໃຊ້ຊີວິດທີ່ມີຄຸນຄ່າດ້ວຍຈິດໃຈອຸດົມສົມບູນ. ຕັ້ງແຕ່ ກຳນົດ "ແຜນງານສົ່ງເສີມນະໂຍບາຍສາກົນຄານາກາວາ" ເດືອນ 5 ປີ1991 ເປັນຕົ້ນມາ ເພື່ອປະຕິບັດນະໂຍບາຍສາກົນແບບແຜນການ ,ແຂວງພວກເຮົາໃຊ້ຄວາມພະຍາຍາມການປະຕິບັດນະໂຍບາຍຫລາຍຢ່າງ ໂດຍການປັບປຸງເນື້ອໃນເຂົ້າກັບການປ່ຽນແປງຂອງສິ່ງແວດລ້ອມສາກົນແລະອື່ນໆ.

ຫລັງຈາກມີການປັບປຸງຂອງແນວທາງປັດຈຸບັນ ໄດ້ຜ່ານໄປ7ປີ, ຈຳນວນພົນລະເມືອງຖືສັນຊາດຕ່າງປະເທດທີ່ອາໄສຢູ່ແຂວງພວກເຮົາແມ່ນກຳລັງເພີ່ມຂຶ້ນເລື້ອຍໆ, ມີຄວາມຈຳເປັນຕ້ອງຮັບມືກັບການເຄື່ອນໄຫວຂອງປະເທດ ຄື ການຂະຫຍາຍການຮັບເອົາຊັບພະຍາກອນຄົນຕ່າງປະເທດໂດຍການສ້າງລະບົບສີມືເຈາະຈົງ ,ການສົ່ງເສີມຂອງການປະຕິບັດນະໂຍບາຍສັງຄົມຮ່ວມມືກັນທີ່ມີວັດທະນະທຳຫລາກຫລາຍ , ການສົ່ງເສີມການສຶກສາພາສາຍີ່ປຸ່ນແລະອື່ນໆ. ນອກຈາກນີ້ ,ມີຄວາມຈຳເປັນຕ້ອງສະໜັບສະໜູນຕໍ່ບັນຫາຕ່າງໆທີ່ໄດ້ປາກົດຂຶ້ນຈາກໄພໂຄວິດ 19.ພວກເຮົາປັບປຸງແນວທາງສົ່ງເສີມການປະຕິບັດນະໂຍບາຍສາກົນຂອງແຂວງຄານາກາວາເພື່ອຮັບມືການປ່ຽນແປງສະຖານະການ ດັ່ງກ່າວ ແລະສົ່ງເສີມການໃຊ້ຄວາມພະຍາຍາມຂອງການປະຕິບັດນະໂຍບາຍສາກົນຂອງແຂວງພວກເຮົາໃຫ້ດີຂຶ້ນ.

# 2 ສະຖານະການຂອງພົນລະເມືອງແຂວງຄານາກາວາທີ່ຖືສັນຊາດຕ່າງປະເທດ

ພົນລະເມືອງຄານາກາວາທີ່ຖືສັນຊາດຕ່າງປະເທດ ແມ່ນ ເດືອນ 1 ປີ 2023 ມີລວມທັງໝົດ 239,301 ຄົນ, ຈຳນວນຕົວເລກຂອງປະເທດແລະພາກພື້ນ ແມ່ນ ຫລາຍທີ່ສຸດໃນອະດີດທີ່ຜ່ານມາ, ຄວາມຫຼາກຫຼາຍແມ່ນມີຄວາມຄືບໜ້າ. ຕາມປະເທດແລະພາກພື້ນ, ຄົນຈີນກວມເອົາ29.4%ຂອງລວມທັງໝົດ, ຖັດໄປແມ່ນຫວຽດນາມ,ເກົາຫລີໃຕ້, ຟີລິບປິນ, ເນປານ.

ພົນລະເມືອງແຂວງຄານາກາວາທີ່ຖືສັນຊາດຕ່າງປະເທດທີ່ອາໄສຢູ່ໃນແຂວງພວກເຮົາໂດຍມີສະຖານະພາບທີ່ຢູ່ອາໄສ ຄື ຄົນທີ່ອາໄສຢູ່ຍີ່ປຸ່ນແບບຖາວອນ ແລະ ຄົນທີ່ອາໄສຢູ່ຍີ່ປຸ່ນໄລຍະຍາວ ແມ່ນ 139,029 ຄົນ ,ຖ້າປຽບທຽບກັບ ປີ 2012 ຫລາຍກ່ວາປະມານ 1.2 ເທົ່າ. ປີ 2012 ມີ 113,746ຄົນ.

ຮູບ1 ຈຳນວນຄົນຕ່າງປະເທດໃນແຂວງຄານາກາວາ ແລະ ຈຳນວນຄົນຕ່າງປະເທດທີ່ອາໄສຢູ່ແຂວງຄານາກາວາໃນໄລຍະຍາວນານ




ຜູ້ສ້າງແມ່ນ ພະແນກສາກົນໂດຍອີງຕາມຂໍ້ມູນຈາກ ສະຖິຕິຄົນຕ່າງປະເທດພາຍໃນແຂວງ(ແຂວງຄານາກາວາ)
ແລະ ສະຖິຕິຄົນຕ່າງປະເທດທີ່ອາໄສຢູ່ຍີ່ປຸ່ນ(ອີງການບໍລິການຄົນເຂົ້າເມືອງ)

ຂໍ້ລະວັງ 1) ຮອດເຖິງປີ 2011 ຈຳນວນຄົນຕ່າງປະເທດ ແມ່ນ ຈຳນວນຄົນທີ່ລົງທະບຽນຄົນຕ່າງປະເທດໂດຍອີງຕາມກົດໝາຍວ່າດ້ວຍການລົງທະບຽນຄົນຕ່າງປະເທດ , ຕັ້ງແຕ່ປີ 2012 ເປັນຕົ້ນມາ ແມ່ນ ຈຳນວນຄົນຕ່າງປະເທດໃນປຶ້ມສະມາໂນຄົວປະຊາຊົນ(ຈົນຮອດປີ 2012, ຂໍ້ມູນທີ່ຂຽນໃສ່ໃນແຜ່ນພັບນີ້ແມ່ນຂໍ້ມູນຂອງໃນວັນທີ 31 ເດືອນ 12, ຕັ້ງແຕ່ປີ 2013 ເປັນຕົ້ນໄປ ແມ່ນຂໍ້ມູນຂອງໃນ ວັນທີ 1 ເດືອນ 1

ຂໍ້ລະວັງ 2) ກ່ຽວກັບຈຳນວນຄົນທີ່ອາໄສຢູ່ຍີ່ປຸ່ນໃນໄລຍະຍາວ ແມ່ນ ຕົວເລກລວມຂອງຄົນທີ່ມີສະຖານະພາບທີ່ຢູ່ອາໄສ ຄື ຄົນທີ່ອາໄສຢູ່ຍີ່ປຸ່ນໃນໄລຍະຍາວ, ຄູ່ສົມລົດຂອງຄົນຍີ່ປຸ່ນ,ຄູ່ສົມລົດຂອງຄົນທີ່ອາໄສຢູ່ຍີ່ປຸ່ນແບບຖາວອນ, ຄົນທີ່ອາໄສຢູ່ຍີ່ປຸ່ນໃນໄລຍະຍາວນານ, ຄົນທີ່ອາໄສຢູ່ຍີ່ປຸ່ນໃນໄລຍະຍາວນານພິເສດ, ເຊິ່ງຢູ່ໃນຄົນຕ່າງປະເທດຕາມສະຖານະພາບທີ່ຢູ່ອາໄສ (ຈຳນວນທັງຫມົດ) ຂອງ "ສະຖິຕິຄົນຕ່າງປະເທດທີ່ອາໄສຢູ່ຍີ່ປຸ່ນ (ອີງການບໍລິການຄົນເຂົ້າເມືອງ)".

## 3 ສະຖານະການຂອງພວກເດັກທີ່ມີສາຍພົວພັນກັບຕ່າງປະເທດ (※)

ຈຳນວນເດັກນັກຮຽນຕ່າງປະເທດທີ່ກຳລັງຮຽນຢູ່ໂຮງຮຽນປະຖົມ, ໂຮງຮຽນມັດທະຍົມຕອນຕົ້ນ ແລະໂຮງຮຽນມັດທະຍົມຕອນປາຍຢູ່ພາຍໃນແຂວງພວກເຮົາ ແມ່ນ ປີ 2012 ມີ 7060ຄົນ ປີ 2023 ມີ 12,725 ຄົນ, ຖ້າປຽບທຽບປີ 2012 ເພີ່ມຂຶ້ນ1.8ເທົ່າ.

ຮູບ 2 ຈຳນວນເດັກນັກຮຽນຕ່າງປະເທດທີ່ກຳລັງຮຽນຢູ່ໂຮງຮຽນປະຖົມ, ໂຮງຮຽນມັດທະຍົມຕອນຕົ້ນ ແລະໂຮງຮຽນມັດທະຍົມຕອນປາຍຢູ່ພາຍໃນແຂວງພວກເຮົາ




ຜູ້ສ້າງແມ່ນພະແນກສາກົນແຂວງຄານາກາວາໂດຍການນຳໃຊ້ຂໍ້ມູນຈາກການສຳຫລວດພື້ນຖານໂຮງຮຽນແຂວງຄານາກາວາ

※ ພວກເດັກທີ່ມີສາຍພົວພັນກັບຕ່າງປະເທດ…"ບໍ່ວ່າເດັກນັ້ນຖືສັນຊາດຍີ່ປຸ່ນກໍຕາມພາສາແມ່ຂອງເດັກນັ້ນບໍ່ແມ່ນພາສາຍີ່ປຸ່ນ"ແລະ"ຄອບຄົວຂອງເດັກນັ້ນມີຍາດຕິພີ່ນ້ອງຕ່າງປະເທດ" ເປັນຕົ້ນ, ສະແດງໃຫ້ເຫັນວ່າ ບໍ່ພຽງແຕ່ຖືສັນຊາດຕ່າງປະເທດເທົ່ານັ້ນ ເດັກນັ້ນຍັງມີພາບເບື້ອງຫລັງມີຫລາກຫລາຍ ເຊັ່ນ ເຜົ່າ, ວັດທະນະທຳເປັນຕົ້ນ.

## 4 ສະຖານະການຂອງນັກສຶກສາຕ່າງປະເທດ

ນັກສຶກສາຕ່າງປະເທດພາຍໃນແຂວງ ແມ່ນ ຕັ້ງແຕ່ປີ 2013 ເປັນຕົ້ນມາ ເພີ່ມຂຶ້ນທຸກໆປີ , ຮອດເຖິງປີ 2019 ມີ 13,855 ຄົນ ເຊິ່ງເປັນຈຳນວນຫລາຍທີ່ສຸດທີ່ຜ່ານມາ. ຕັ້ງແຕ່ປີ 2020 ເປັນຕົ້ນມາ ໄດ້ຫລຸດລົງ ຍ້ອນວ່າການຕິດເຊື້ອໂຄວິດ19ສາຍພັນໃໝ່ໄດ້ລະບາດ ມີການຈຳກັດຈຳນວນຄົນທີ່ເຂົ້າເມືອງ, ແຕ່ ປີ2023 ໄດ້ເພີ່ມຂຶ້ນອີກແລ້ວ.

ຮູບ3 ຈຳນວນນັກສຶກສາຕ່າງປະເທດພາຍໃນແຂວງ




ການສຳຫລວດນັກສຶກສາຕ່າງປະເທດທີ່ກຳລັງຮຽນຢູ່ມາຫາວິທະຍາໄລແລະອື່ນໆພາຍໃນແຂວງຄານາກາວາ(ແຂວງຄານາກາວາ)

# ເປົ້າໝາຍພື້ນຖານແລະ ທິດທາງຂອງການປະຕິບັດນະໂຍບາຍ

## ເປົ້າໝາຍທີ່ມຸ່ງໄປສູ່

- ການກາຍເປັນຈິງຂອງສັງຄົມຮ່ວມກັນທີ່ມີວັດທະນະທໍາຫລາກຫລາຍຢ່າງສັນຕິພາບໂດຍການຮ່ວມມືແລະການຕິດຕໍ່ຮ່ວມມືກັນຢ່າງກວ້າງຂວາງ
- ການແຜ່ຂະຫຍາຍອອກໄປຂອງຍຸດທະສາດລະດັບໂລກໂດຍການນໍາໃຊ້ຈຸດດີຂອງຄານາກາວາ

## ເປົ້າໝາຍພື້ນຖານ

1. ການສ້າງສັງຄົມທ້ອງຖິ່ນທີ່ມີການຮ່ວມກັນທີ່ມີວັດທະນະທໍາຫລາກຫລາຍ
2. ການແຜ່ຂະຫຍາຍອອກໄປລະດັບໂລກໂດຍການນໍາໃຊ້ຈຸດດີຂອງຄານາກາວາ
3. ການສົ່ງເສີມການເຮັດວຽກຂອງຊັບພະຍາກອນມະນຸດສາກົນ
4. ການເຜີຍແຜ່ຂອງການບໍ່ໃຫ້ມີອາວຸດນິວເຄລຍ/ຈິດສໍານຶກສັນຕິພາບ
5. ການສົ່ງເສີມໃຫ້ການສະໜັບສະໜູນຂອງກິດຈະກໍາສາກົນຂອງພົນລະເມືອງແຂວງ, ການສົ່ງເສີມການຮ່ວມມື/ການພົວພັນຕິດຕໍ່ກັນ

## ທິດທາງຂອງການປະຕິບັດນະໂຍບາຍ

**1**
- (1) ການປັບປຸງສິ່ງແວດລ້ອມໃນການໃຊ້ຊີວິດຂອງພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດໃຫ້ດີຂຶ້ນ
- (2) ການສ້າງຄວາມເຂັ້ມແຂງໃຫ້ການສຶກສາພາສາຍີ່ປຸ່ນ
- (3) ການສະໜັບສະໜູນພວກເດັກທີ່ມີສາຍພົວພັນກັບຕ່າງປະເທດ
- (4) ການສະໜັບສະໜູນນັກສຶກສາຕ່າງປະເທດທີ່ໃຊ້ຊີວິດແລະຮຽນຢູ່ຄານາກາວາ
- (5) ການສະໜັບສະໜູນພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດໃນກໍລະນີໄພພິບັດເກີດຂຶ້ນ ເປັນຕົ້ນ
- (6) ການສົ່ງເສີມຂອງການສ້າງຄວາມເຂົ້າໃຈວັດທະນະທໍາຫລາກຫລາຍ

**2**
- (7) ການສະໜັບສະໜູນບໍລິສັດພາຍໃນແຂວງຂະຫຍາຍທຸລະກິດຢູ່ຕ່າງປະເທດແລະການດຶງດູດບໍລິສັດຕ່າງປະເທດມາລົງທຶນແຂວງຄານາກາວາ
- (8) ການສົ່ງເສີມ/ການເຜີຍແຜ່ຂອງ "ການດູແລະສຸກຂະພາບ/ຊາຍແດນໃໝ່"
- (9) ການສົ່ງເສີມການດຶງດູດນັກທ່ອງທ່ຽວຕ່າງປະເທດ
- (10) ການສົ່ງເສີມ "MagCul" ເຊິ່ງເປັນຄໍາຫຍໍ້ຈາກ "Magnet Culture"

**3**
- (11) ການສົ່ງເສີມການແລກປ່ຽນສາກົນ/ການຮ່ວມມືສາກົນໂດຍການນໍາໃຊ້ລັກສະນະພິເສດຂອງຄານາກາວາ
- (12) ການກໍ່ສ້າງຊັບພະຍາກອນທີ່ສາມາດເຮັດວຽກໄດ້ດີຢູ່ໃນສັງຄົມສາກົນ
- (13) ການສົ່ງເສີມການເຮັດວຽກຂອງຊັບພະຍາກອນມະນຸດຈາກຕ່າງປະເທດ
- (14) ການປັບປຸງສິ່ງແວດລ້ອມແຮງງານໃຫ້ດີຂຶ້ນສໍາລັບຊັບພະຍາກອນມະນຸດຕ່າງປະເທດ

**4**
- (15) ການເຜີຍແຜ່ຂອງການບໍ່ໃຫ້ມີອາວຸດນິວເຄລຍ/ຈິດສໍານຶກສັນຕິພາບ

**5**
- (16) ການໃຫ້ການສະໜັບສະໜູນກິດຈະກໍາສຂອງພົນລະເມືອງແຂວງ ແລະ ການຮ່ວມມື/ການພົວພັນຕິດຕໍ່ກັນ
- (17) ການສົ່ງເສີມຂອງມາດຕະການຕໍ່ຖານທັບ
- (18) ການປ້ອງກັນບໍ່ໃຫ້ລືມບັນຫາການລັກພາຕົວແລະການສົ່ງເສີມສ້າງຄວາມເຂົ້າໃຈຂອງພົນລະເມືອງແຂວງ

# ທິດທາງຂອງການປະຕິບັດນະໂຍບາຍ

# ເປົ້າໝາຍພື້ນຖານ 1 ການສ້າງສັງຄົມທ້ອງຖິ່ນທີ່ມີການຮ່ວມກັນທີ່ມີວັດທະນະທຳຫລາກຫລາຍ

## (1) ການປັບປຸງສິ່ງແວດລ້ອມໃນການໃຊ້ຊີວິດຂອງພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດໃຫ້ດີຂຶ້ນ

ເພື່ອສ້າງສິ່ງແວດລ້ອມທີ່ອຳນວຍໃຫ້ ພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດແລະອື່ນໆ ສາມາດໃຊ້ຊີວິດແບບມີຊີວິຊີວາໄດ້ໃນທ້ອງຖິ່ນ ແຂວງພວກເຮົາສ້າງລະບົບໃຫ້ຄຳປຶກສາແບບຮອບດ້ານສຳລັບພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດ ແລະ ການສະໜອງຂ່າວສານຂໍ້ມູນດ້ວຍຫລາຍພາສາ/ພາສາຍີ່ປຸ່ນທີ່ເຂົ້າໃຈງ່າຍໃຫ້ດີຂຶ້ນ, ນອກຈາກນີ້ ພວກເຮົາຍັງສົ່ງເສີມການປະຕິບັດນະໂຍບາຍຂອງທຸກຂະແໜງການທີ່ກ່ຽວຂ້ອງກັບການໃຊ້ຊີວິດ ຄື ການສົ່ງຜູ້ແປພາສາໄປສະຖາບັນການແພດ ແລະອົງການຈັດຕັ້ງພາກລັດ, ສະໜັບສະໜູນການເຊົ່າເຮືອນ
ໃນການໃຊ້ຄວາມພະຍາຍາມ, ໂດຍການຮ່ວມມືກັບພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດທີ່ອາໄສຢູ່ແຂວງຄານາກາວາ, ແຂວງພວກເຮົາ ສົ່ງເສີມການເຂົ້າຮ່ວມກິດຈະກຳການສ້າງສັງຄົມທ້ອງຖິ່ນຂອງພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດ.ນອກຈາກນີ້,ໃຊ້ຄວາມພະຍາຍາມການສົ່ງເສີມປະຕິບັດນະໂຍບາຍສິດທິມະນຸດ ເຊັ່ນ ການປັບປຸງນິຕິກຳ/ລະບົບທີ່ມີສ່ວນກັບພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດ ແລະ ການລົບລ້າງ　Hate Speech: ຄຳເວົ້າສະແດງຄວາມກຽດຊັງ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບຍ]**

- ການສ້າງລະບົບໃຫ້ຄຳປຶກສາສຳລັບພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດແລະອື່ນໆໆ ແລະ ການເຮັດການສະໜອງຂ່າວສານຂໍ້ມູນໃຫ້ດີຂຶ້ນ
- ການເຮັດການສະໜັບສະໜູນຕໍ່ການໃຊ້ຊີວິດຂອງພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດແລະອື່ນໆໃຫ້ດີຂຶ້ນ
- ການສົ່ງເສີມບໍລິການການແພດແລະສະວັດດີການໃຫ້ພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດແລະອື່ນໆ
- ການສົ່ງເສີມຂອງການຝຶກອົບຮົມສຳລັບຜູ້ສະໜັບສະໜູນເພື່ອມຸ່ງໜ້າສູ່ການແກ້ໄຂບັນຫາຂອງພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດແລະອື່ນໆ
- ການສົ່ງເສີມເຂົ້າຮ່ວມການປົກຄອງຂັ້ນແຂວງຂອງພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດແລະອື່ນໆ
- ການເຄົາລົບສິດທິມະນຸດຕໍ່ພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດແລະອື່ນໆ
- ການປັບປຸງນິຕິກຳ/ລະບົບທີ່ມີສ່ວນກັບພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດ

## (2) ການສ້າງຄວາມເຂັ້ມແຂງໃຫ້ການສຶກສາພາສາຍີ່ປຸ່ນ

ເພື່ອເຮັດໃຫ້ພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດເປັນສະມາຊິກໜຶ່ງຂອງສັງຄົມທ້ອງຖິ່ນແລະສາມາດໃຊ້ຊີວິດດ້ວຍບໍ່ມີຄວາມກັງວົນ,ເຮັດວຽກໄດ້ດີ, ພວກເຮົາຄວນປັບປຸງສິ່ງແວດລ້ອມໃຫ້ເໝາະສົມ, ໃນທຸກໆເຂດພາຍໃນແຂວງໃຊ້ຄວາມພະຍາຍາມໃຫ້ການສະໜັບສະໜູນໂດຍອີງຕາມສະພາບຈິງຂອງທ້ອງຖິ່ນ ເພື່ອເຮັດໃຫ້ ພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດສາມາດຮຽນຮູ້ຄວາມສາມາດພາສາຍີ່ປຸ່ນທີ່ຈຳເປັນໄດ້, ປະຕິບັດການສຶກສາພາສາຍີ່ປຸ່ນສຳລັບ ພວກເດັກທີ່ມີສາຍພົວພັນກັບຕ່າງປະເທດແລະແຮງງານຕ່າງປະເທດ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບຍ]**

- ການປັບປຸງຂອງລະບົບການສຶກສາພາສາຍີ່ປຸ່ນໃນທ້ອງຖິ່ນທີ່ຕິດຕໍ່ຮ່ວມມືກັນກັບຫ້ອງວ່າການປົກຄອງເມືອງແລະອົງການທີ່ກ່ຽວຂ້ອງ
- ການກໍ່ສ້າງຊັບພະຍາກອນມະນຸດທີ່ຄ້ຳຊູກິດຈະກຳການສຶກສາພາສາຍີ່ປຸ່ນຂອງທ້ອງຖິ່ນ ແລະ ການສ້າງເຄືອຂ່າຍ
- ການເຮັດການສະໜອງຂ່າວສານຂໍ້ມູນກ່ຽວກັບການສຶກສາພາສາຍີ່ປຸ່ນຂອງທ້ອງຖິ່ນໃຫ້ດີຂຶ້ນ ແລະ ການສົ່ງເສີມການເຂົ້າເຖິງການຮຽນພາສາຍີ່ປຸ່ນຂອງພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດແລະອື່ນໆ
- ການສົ່ງເສີມຂອງການສຶກສາພາສາຍີ່ປຸ່ນພວກເດັກທີ່ມີສາຍພົວພັນກັບຕ່າງປະເທດ
- ການສົ່ງເສີມຂອງການສຶກສາພາສາຍີ່ປຸ່ນແຮງງານຕ່າງປະເທດແລະອື່ນໆ



【ຫລັກສູດພາສາຍີ່ປຸ່ນສຳລັບຜູ້ເລີ່ມຕົ້ນ】



【ຫລັກສູດການກໍ່ສ້າງອາສາສະໝັກສອນພາສາຍີ່ປຸ່ນທີ່ຕິດຕໍ່ຮ່ວມມືກັນກັບຫ້ອງວ່າການປົກຄອງເມືອງ】

# ທິດທາງຂອງການປະຕິບັດນະໂຍບາຍ

# ເປົ້າໝາຍພື້ນຖານ 1 ການສ້າງສັງຄົມທ້ອງຖິ່ນທີ່ມີການຮ່ວມກັນທີ່ມີວັດທະນະທຳຫລາກຫລາຍ

## (3) ການສະໜັບສະໜູນພວກເດັກທີ່ມີສາຍພົວພັນກັບຕ່າງປະເທດ

ເພື່ອເຮັດໃຫ້ພວກເດັກທີ່ມີສາຍພົວພັນກັບຕ່າງປະເທດເຕີບໂຕດ້ວຍບໍ່ມີ
ຄວາມກັງວົນ,ປັບປຸງສິ່ງແວດລ້ອມໃຫ້ເໝາະສົມກັບການຮຽນ, ພວກເຮົາໃຊ້ຄວາມພະຍາຍາມຕິດຕໍ່ຮ່ວມມືກັນກັບຫ້ອງວ່າການປົກຄອງເມືອງແລະອົງການກ່ຽວຂ້ອງ,ປະຕິບັດການສະໜັບສະໜຸນພວກເດັກທີ່ມີສາຍພົວພັນກັບຕ່າງປະເທດຕ່າງໆ ເຊັ່ນ ການສ້າງໂອກາດການສຶກສາໃຫ້ຫລາຍຂຶ້ນ ແລະ ການສະໜັບສະໜຸນການແປພາສາດ້ວຍຫລາຍພາສາໃນການລ້ຽງລູກ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບຍ]**

- ການສ້າງໂອກາດການສຶກສາໃຫ້ຫລາຍຂຶ້ນຂອງພວກເດັກທີ່ມີສາຍພົວພັນກັບຕ່າງປະເທດ
- ການເຮັດການສຶກສາໃຫ້ດີຂຶ້ນຂອງພວກເດັກທີ່ມີສາຍພົວພັນກັບຕ່າງປະເທດ
- ການສົ່ງເສີມຂອງການຝຶກອົບຮົມໃຫ້ຄູແລະຜູ້ສະໜັບສະໜຸນແລະອື່ນໆ
- ການສົ່ງເສີມການສະໜັບສະໜຸນລ້ຽງລູກໃຫ້ພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດແລະອື່ນໆ

## (4) ການສະໜັບສະໜູນນັກສຶກສາຕ່າງປະເທດທີ່ໃຊ້ຊີວິດແລະຮຽນຢູ່ຄານາກາວາ

ພວກເຮົາບໍລິຫານ “ແຟນຄັບສາກົນຄານາກາວາ KANAFAN STATION” ເຊິ່ງສະໜອງໂອກາດການຂໍຄຳປຶກສາການໃຊ້ຊີວິດ/ການຊອກວຽກ ແລະ ສະໜອງໂອກາດແລະສະຖານທີ່ການແລກປ່ຽນກັບຄົນຍີ່ປຸ່ນ ສຳລັບນັກສຶກສາຕ່າງປະເທດທີ່ໃຊ້ຊີວິດແລະຮຽນຢູ່ແຂວງຄານາກາວາ , ນອກຈາກນີ້ ຍັງໃຫ້ການສະໜັບສະໜູນນັກສຶກສາຕ່າງປະເທດ ໂດຍຕິດຕໍ່ຮ່ວມມືກັນກັບ ສະຖາບັນການສຶກສາເຊັ່ນ ມະຫາວິທະຍາໄລ /ໂຮງຮຽນສອນວິຊາສະເພາະ, NPO,ບໍລິສັດ,
ປະຕິບັດການສະໜັບສະໜຸນການຊອກຫາວຽກຂອງນັກສຶກສາຕ່າງປະເທດຢູ່ພາຍໃນແຂວງ,ສົ່ງເສີມການປະຕິບັດກິດຈະກຳເພື່ອເຊື່ອມຕໍ່ ລະຫວ່າງ ນັກສຶກສາ ກັບ ທ້ອງຖິ່ນ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບຍ]**

- ການຂະຫຍາຍຂອງການສະໜັບສະໜຸນນັກສຶກສາຕ່າງປະເທດໂດຍການໃຊ້“ແຟນຄັບນານາຊາດຄານາກາວາ KANAFAN STATION”ເປັນຫລັກ
- ການສະໜັບສະໜຸນນັກສຶກສາຕ່າງປະເທດໂດຍຕິດຕໍ່ຮ່ວມມືກັນກັບສະຖາບັນການສຶກສາ, NPO,ບໍລິສັດແລະອື່ນໆ
- ກາສະໜັບສະໜຸນການຊອກວຽກໃນແຂວງຄານາກາວາຫຼັງຈາກສຳເລັດການສຶກສາ




【 ບຸນເທສະການແລກປ່ຽນກັບຄົນຍີ່ປຸ່ນໃນແຟນຄັບສາກົນຄານາກາວາKANAFAN STATION 】



【ສະຖານະການໃນ KANAFAN STATION】

ທິດທາງຂອງການປະຕິບັດນະໂຍບາຍ

# ເປົ້າໝາຍພື້ນຖານ 1 ການສ້າງສັງຄົມທ້ອງຖິ່ນທີ່ມີການຮ່ວມກັນທີ່ມີວັດທະນະທຳຫລາກຫລາຍ

## (5) ການສະໜັບສະໜູນພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດໃນກໍລະນີໄພພິບັດເກີດຂຶ້ນ ເປັນຕົ້ນ

ໃນກໍລະນີໄພພິບັດ ແລະ ການແຜ່ລະບາດຂອງການຕິດເຊື້ອພະຍາດ,ພວກເຮົາໃຊ້ຄວາມພະຍາຍາມໂດຍຕິດຕໍ່ຮ່ວມມືກັນກັບຫ້ອງວ່າການປົກຄອງເມືອງແລະອົງການກ່ຽວຂ້ອງ ເພື່ອສະໜັບສະໜູນພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດ ເຊັ່ນ ການສະໜອງຂໍ້ມູນດ້ວຍພາສາຫລາກຫລາຍ ແລະ ພາສາຍີ່ປຸ່ນທີ່ເຂົ້າໃຈງ່າຍ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບາຍ]**

- ການສົ່ງເສີມການຮັບມືການຂໍຄຳປຶກສາ ແລະ ການສະໜອງຂໍ້ມູນ ສຳລັບພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດ ໃນກໍລະນີໄພພິບັດເກີດຂຶ້ນ ເປັນຕົ້ນ.
- ການປະຕິບັດການຝຶກອົບຮົມໃຫ້ອາສາສະໝັກລ່າມແປພາສາໃນກໍລະນີໄພພິບັດ

## (6) ການສົ່ງເສີມຂອງການສ້າງຄວາມເຂົ້າໃຈວັດທະນະທຳຫລາກຫລາຍ

ເພື່ອສົ່ງເສີມການສ້າງຄວາມເຂົ້າໃຈຕໍ່ວັດທະນະທຳຫລາກຫລາຍ, ພວກເຮົາສະໜອງໂອກາດການສຶກສາໃນທ້ອງຖິ່ນແລະຂ່າວສານຂໍ້ມູນ, ຍັງຈັດຂຶ້ນບຸນເທສະການໂດຍການຍົກຂຶ້ນຫົວຂໍ້ຄື ການຮ່ວມກັນທີ່ມີວັດທະນະທຳຫລາກຫລາຍ. ນອກຈາກນີ້ຍັງ ປະຕິບັດການຝຶກອົບຮົມເພື່ອສ້າງຄວາມເຂົ້າໃຈຕໍ່ວັດທະນະທຳຫລາກຫລາຍຢູ່ໂຮງຮຽນ ແລະອື່ນໆ,ຈັດການຝຶກອົບຮົມໃຫ້ບັນດາທ່ານທີ່ສະໜັບສະໜູນພົນລະເມືອງແຂວງທີ່ຖືສັນຊາດຕ່າງປະເທດແລະອື່ນໆແລະຈັດສຳມະນາແລະອື່ນໆສຳລັບພົນລະເມືອງແຂວງຄານາກາວາ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບາຍ]**

- ການສົ່ງເສີມການສ້າງຄວາມເຂົ້າໃຈຕໍ່ວັດທະນະທຳຫລາກຫລາຍໃນທ້ອງຖິ່ນ
- ການສົ່ງເສີມການສ້າງຄວາມເຂົ້າໃຈຕໍ່ວັດທະນະທຳຫລາກຫລາຍໃນການສຶກສາໂຮງຮຽນ
- ການປະຕິບັດການຈັດສຳມະນາ /ການຝຶກອົບຮົມເພື່ອສ້າງຄວາມເຂົ້າໃຈຕໍ່ວັດທະນະທຳຫລາກຫລາຍຢ່າງເລິກເຊິ່ງ/ການເຮັດການປະຕິບັດການຈັດສຳມະນາ/ການຝຶກອົບຮົມໃຫ້ດີຂຶ້ນເພື່ອສ້າງຄວາມເຂົ້າໃຈຕໍ່ວັດທະນະທຳຫລາກຫລາຍຢ່າງເລິກເຊິ່ງ




【Earth Festa Kanagawa: ງານສັງສັນໂລກຄານາກາວາ】



【ຫ້ອງສະມຸດວິດີໂອຢູ່ໃນ Kanagawa Plaza for Global Citizenship : ຄານາກາວາພລາຊາເພື່ອເປັນພົນລະເມືອງທົ່ວໂລກ】

ທິດທາງຂອງການປະຕິບັດນະໂຍບາຍ

# ເປົ້າໝາຍພື້ນຖານ 2 ການແຜ່ຂະຫຍາຍອອກໄປລະດັບໂລກໂດຍການນຳໃຊ້ຈຸດດີຂອງຄານາກາວາ

## (7) ການສະໜັບສະໜູນບໍລິສັດພາຍໃນແຂວງຂະຫຍາຍທຸລະກິດຢູ່ຕ່າງປະເທດແລະການດຶງດູດບໍລິສັດຕ່າງປະເທດມາລົງທຶນແຂວງຄານາກາວາ

ສະໜັບສະໜູນການຂະຫຍາຍທຸລະກິດສາກົນໂດຍການສະໜອງຂໍ້ມູນຂ່າວສານແລະການຈັດປະຊຸມການປຶກສາທີ່ກ່ຽວກັບການຂະຫຍາຍທຸລະກິດຢູ່ຕ່າງປະເທດແລະອື່ນໆເພື່ອສົ່ງເສີມການຂະຫຍາຍການຈຳໜ່າຍສິນຄ້າຢູ່ຕ່າງປະເທດຂອງວິສາຫະກິດຂະໜາດນ້ອຍແລະກາງທີ່ມີເຕັກໂນໂລຊີສູງ. ນອກຈາກນີ້ ພວກເຮົາຍັງໃຫ້ການສະໜັບສະໜູນກ່ຽວກັບ ກິດຈະກຳການສົ່ງເສີມຢູ່ຕ່າງປະເທດ ແລະ ການກໍ່ຕັ້ງບໍລິສັດຕ່າງປະເທດ ເພື່ອດຶງດູດການລົງທຶນຈາກບໍລິສັດຕ່າງປະເທດ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບາຍ]**

- ການສະໜັບສະໜູນເພື່ອມຸ່ງໜ້າສູ່ການຂະຫຍາຍທຸລະກິດສາກົນຂອງວິສາຫະກິດຂະໜາດນ້ອຍແລະກາງ
- ການດຶງດູດການລົງທຶນບໍລິສັດຕ່າງປະເທດໂດຍກິດຈະກຳການສົ່ງເສີມຢູ່ຕ່າງປະເທດ



【ສຳມະນາເພື່ອດຶງດູດການລົງທຶນຂອງບໍລິສັດທີ່ຈັດຢູ່ ຮ່າໂນ້ຍ ປະເທດຫວຽດນາມ】



【ປະຊຸມທຸລະກິດທີ່ຈັດຢູ່ ຕ້າຫລຽນ ປະເທດຈີນ】

## (8) ການສົ່ງເສີມ/ການເຜີຍແຜ່ຂອງ "ການດູແລະສຸຂະພາບ/ຊາຍແດນໃໝ່"

ພວກເຮົາໃຊ້ຄວາມພະຍາຍາມການເຜີຍແຜ່ ແນວຄິດ ME-BYO ແລະ "ສັງຄົມທີ່ຊີວິດສ່ອງແສງໄຟ/ Vibrant INOCHI" ໂດຍການຕິດຕໍ່ຮ່ວມມືກັນກັບພາກພື້ນຂອງ ອຸດສາຫະກຳວິທະຍາສາດຊີວິດຂັ້ນສູງ ແລະ WHO ແລະອື່ນໆ, ນອກຈາກນີ້,ພວກເຮົາຍັງສົ່ງເສີມການຂະຫຍາຍຕົວສາກົນຂອງອຸດສາຫະກຳ ເຊັ່ນ ການດູແລການແພດທີ່ມີເທັກໂນໂລຍີທີ່ທັນສະໄໝ ແລະ ອຸດສາຫະກຳການດູແລຄົນທີ່ຍັງບໍ່ທັນເສຍສຸກຂະພາບແຕ່ມີຄວາມສ່ຽງເປັນໂລກພະຍາດ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບາຍ]**

- ການສົ່ງເສີມການຂະຫຍາຍຕົວສາກົນໃນອຸດສາຫະກຳທາງການແພດ ຄື ການດູແລການແພດທີ່ມີເຕັກໂນໂລຊີທັນສະໄໝ ແລະ ການດູແລຄົນທີ່ຍັງບໍ່ທັນເສຍສຸກຂະພາບແຕ່ມີຄວາມສ່ຽງເປັນໂລກພະຍາດ
- ການເຜີຍແຜ່ຄວາມພະຍາຍາມຂອງການປະຕິບັດນະໂຍບາຍກ່ຽວກັບການດູແລຮັກສາສຸກຂະພາບຜ່ານການຕິດຕໍ່ຮ່ວມມືກັນກັບອົງການອະນາໄມໂລກ(WHO)
- ການກໍ່ສ້າງຜູ້ປະດິດສ້າງນະວັດຕະກຳສຸກຂະພາບລຸ້ນຕໍ່ໄປຢູ່ສາຂານະວັດຕະກຳສຸກຂະພາບຂອງບັນດິດມະຫາວິທະຍາໄລຂອງມະຫາວິທະຍາໄລສຸກຂະພາບສະວັດດີການ

# ທິດທາງຂອງການປະຕິບັດນະໂຍບາຍ

# ເປົ້າໝາຍພື້ນຖານ 2 ການແຜ່ຂະຫຍາຍອອກໄປລະດັບໂລກໂດຍການນຳໃຊ້ຈຸດດີຂອງຄານາກາວາ

## (9) ການສົ່ງເສີມການດຶງດູດນັກທ່ອງທ່ຽວຕ່າງປະເທດ

ບໍ່ພຽງແຕ່ຂຸດຄົ້ນ ແລະພັດທະນາ ຊັບພະຍາກອນແຫລ່ງທ່ອງທ່ຽວໂດຍການນຳໃຊ້ ຂໍ້ມູນການທ່ອງທ່ຽວຂອງນັກທ່ອງທ່ຽວຕ່າງປະເທດ ແລະ ເຜີຍແຜ່ຂໍ້ມູນການທ່ອງທ່ຽວຜ່ານເວັບໄຊທ໌ເທົ່ານັ້ນ, ພວກເຮົາຍັງປະຕິບັດການສົ່ງເສີມຜ່ານຜູ້ແທນການທ່ອງທ່ຽວ（※）.ນອກຈາກນີ້ ພວກເຮົາຍັງໃຊ້ຄວາມພະຍາຍາມ ການປັບປຸງສິ່ງແວດລ້ອມການຮັບນັກທ່ອງທ່ຽວຕ່າງປະເທດເຊິ່ງຈະຊ່ວຍຍົກລະດັບຂຶ້ນຂອງຄວາມພໍໃຈຂອງນັກທ່ອງທ່ຽວຕ່າງປະເທດ ເຊັ່ນ ການກໍ່ສ້າງຊັບພະຍາກອນຜູ້ນຳທ່ຽວທີ່ມີວິຊາສະເພາະໃນລະດັບສູງ ແລະ ການປັບປຸງສິ່ງແວດລ້ອມຂອງສິ່ງອຳນວຍຄວາມສະດວກກ່ຽວກັບການທ່ອງທ່ຽວ.

※ ຜູ້ແທນການທ່ອງທ່ຽວ: ຜູ້ແທນການທ່ອງທ່ຽວ ແມ່ນຜູ້ປະກອບການປະຕິບັດການສົ່ງເສີມການຂາຍໃຫ້ ສື່ສານມວນຊົນແລະຜູ້ປະກອບການການທ່ອງທ່ຽວຢູ່ໃນປະເທດນັ້ນ ແທນ ອຳນາດການປົກຄອງທ້ອງຖິ່ນ ແລະຜູ້ປະກອບການທ່ອງທ່ຽວຢູ່ຍີ່ປຸ່ນ,ປະຕິບັດກິດຈະກຳການຂາຍແລະສະໜອງຂໍ້ມູນເພື່ອດຶງດູດນັກທ່ອງທ່ຽວຕ່າງປະເທດມາທ່ຽວຍີ່ປຸ່ນ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບາຍ]**

- ການນຳໃຊ້ຂໍ້ມູນການທ່ອງທ່ຽວ ຄື ການສຳຫລວດຄວາມຕ້ອງການຂອງນັກທ່ອງທ່ຽວຕ່າງປະເທດແລະອື່ນໆ
- ການຂຸດຄົ້ນແລະການພັດທະນາແຫລ່ງທ່ອງທ່ຽວ ແລະ ການເຜີຍແຜ່ຂອງຂໍ້ມູນການທ່ອງທ່ຽວໂດຍການນຳໃຊ້ ເວັບໄຊທ໌ຂໍ້ມູນການທ່ອງທ່ຽວພາສາຕ່າງປະເທດ
- ການປະຕິບັດການສົ່ງເສີມເພື່ອດຶງດູດນັກທ່ອງທ່ຽວຕ່າງປະເທດ
- ການກໍ່ສ້າງຊັບພະຍາກອນມະນຸດການທ່ອງທ່ຽວ ແລະ ການປັບປຸງສິ່ງແວດລ້ອມຂອງການຮັບນັກທ່ອງທ່ຽວຕ່າງປະເທດ



【ການສົ່ງເສີມໂດຍການເອົາບໍລິສັດທ່ອງທ່ຽວຢູ່ຕ່າງປະເທດເປັນກຸ່ມເປົ້າໝາຍ】



【ປະຊຸມທຸລະກິດທາງອອນໄລ MICE ຢູ່ໄຕ້ຫວັນ】

※MICEແມ່ນຄຳຫຍໍ້ໂດຍການເອົາໂຕທີໜຶ່ງ ຂອງແຕ່ລະຄຳສັບ ດັ່ງຕໍ່ໄປນີ້ ຄື ປະຊຸມຂອງບໍລິສັດ（Meeting）,ລາງວັນ/ທັດສະນະສຶກສາຂອງບໍລິສັດ（Incentive Travel）, ປະຊຸມນານາຊາດຂອງອົງການຈັດຕັ້ງສາກົນ/ກຸ່ມ,ສະມາຄົມວິຊາການ（Convention）, ງານວາງສະແດງສິນຄ້າ/ຕະຫລາດວາງສະແດງສິນຄ້າ, ງານສະແດງ（Exhibition/Event）,MICE ແມ່ນ ຄຳທົ່ວໄປຂອງ ງານສະແດງທີ່ຄາດວ່າຈະດຶງດູດລູກຄ້າຫລາຍຄົນແລະພົວພັນກັນໄດ້.

## (10) ການສົ່ງເສີມ “MagCul” ເຊິ່ງເປັນຄຳຫຍໍ້ຈາກ “Magnet Culture”

ພວກເຮົາສົ່ງເສີມໃຊ້ຄວາມພະຍາຍາມໃຫ້ຍິ່ງຂຶ້ນຂອງ “MagCul” ເຊິ່ງເປັນຄຳຫຍໍ້ຈາກ “Magnet Culture”ເຊິ່ງດຶງດູດຄົນດ້ວຍສະເໜ່ຂອງວັດທະນຄານາກາວາສິລະປະ, ໃຫ້ທ້ອງຖິ່ນມີຊີວິດຊີວາ, ເຜີຍແຜ່ສະເໜ່ວັດທະນະທຳຄານາກາວາໄປທົ່ວໂລກ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບາຍ]**

- ການເຜີຍແຜ່ຂໍ້ມູນເລື່ອງທີ່ມີສະເໜ່ຂອງແຂວງຄານາກາວາດ້ວຍຫລາຍພາສາ

# ທິດທາງຂອງການປະຕິບັດນະໂຍບາຍ

# ເປົ້າໝາຍພື້ນຖານ 3 ການສົ່ງເສີມການເຮັດວຽກຂອງຊັບພະຍາກອນມະນຸດສາກົນ

## (11) ການສົ່ງເສີມການແລກປ່ຽນສາກົນ/ການຮ່ວມມືສາກົນໂດຍການນຳໃຊ້ລັກສະນະພິເສດຂອງຄານາກາວາ

ພວກເຮົາສົ່ງເສີມການແລກປ່ຽນ ຂະແໜງການກິລາ/ວັດທະນະທຳເປັນຕົ້ນ ກັບຊາວໜຸ່ມຂອງມົນທົນຫລຽວໜິງ ປະເທດຈີນ, ຄຢອງກິໂດເກົາຫລີໃຕ້ ໂດຍການເອົາສະຖານທີ່ແລກປ່ຽນມິດຕະພາບເປັນຫລັກ ແລະ ສົ່ງເສີມການຕິດຕໍ່ຮ່ວມມືກັນກັບອົງການຈັດຕັ້ງສາກົນ.ນອກຈາກນີ້　ປະຕິບັດການຮັບນັກຝຶກອົບຮົມ/ການຈັດຂຶ້ນການຝຶກອົບຮົມສຳລັບຊັບພະຍາກອນມະນຸດລະດັບຊັ້ນກາງແລະຜູ້ນຳພາທີ່ປະກອບສ່ວນການພັດທະນາໃນພາກພື້ນກຳລັງພັດທະນາ,ຮຽນຮູ້ທັກສະສີມືແລະກໍ່ສ້າງຊັບພະຍາກອນມະນຸດ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບາຍ]**

- ການເຮັດ ແຟນຄັບນານາຊາດຄານາກາວາ KANAFAN STATION ໃຫ້ດີຂຶ້ນ ເຊິ່ງມຸ່ງໜ້າສູ່ການສ້າງລະບົບເຄືອຂ່າຍຄົນຕ່າງປະເທດຢູ່ທັງພາຍໃນແລະນອກປະເທດທີ່ມີຄວາມຮູ້ສຶກສະນິດສະໜົມກັບແຂວງຄານາກາວານັກສຶກສາຕ່າງປະເທດ.
- ການສະໜັບສະໜູນນັກສຶກສາຕ່າງປະເທດໂດຍຕິດຕໍ່ຮ່ວມມືກັນກັບສະຖາບັນການສຶກສາ,NPO,ບໍລິສັດແລະອື່ນໆ
- ການສົ່ງເສີມການແລກປ່ຽນສາກົນກັບສະຖານທີ່ແລກປ່ຽນມິດຕະພາບ
- ການສົ່ງເສີມການແລກປ່ຽນສາກົນຂອງຄວາມເປັນມໍລະດົກທີ່ຈະສືບທອດຂອງງານແຂ່ງຂັນໂອລິມປິກແລະພາລາລິມປິກທີ່ໂຕກຽວ 2020
- ການສົ່ງເສີມຂອງການແລກປ່ຽນສາກົນໂດຍການດຶງດູດ/ການຈັດຂອງກອງປະຊຸມສາກົນ
- ການກໍ່ສ້າງຊັບພະຍາກອນມະນຸດໃນຂະໜງການຕ່າງໆ ແລະ ການສົ່ງຜູ້ຊີ້ນຳ
- ການພົວພັນຕິດຕໍ່ກັນກັບອົງການຈັດຕັ້ງສາກົນໃນຂະແໜງການສິ່ງແວດລ້ອມໂລກ



【ສະຖານະການໃນລະຫວ່າງການຢ້ຽມຢາມມົນທົນ ຫລຽວໜິງ ປະເທດຈີນ】



【ສະຖານະການໃນລະຫວ່າງການຢ້ຽມຢາມ ລັດ ແມຣີແລນ ສະຫະລັດອາເມລິກາ】

## (12) ການກໍ່ສ້າງຊັບພະຍາກອນທີ່ສາມາດເຮັດວຽກໄດ້ດີຢູ່ໃນສັງຄົມສາກົນ

ຜ່ານ ການສຶກສາທີ່ສາມາດຕອບຮັບການຫັນເປັນສາກົນໄດ້ ແລະ ກິດຈະກຳໃນໂຮງຮຽນທີ່ໄດ້ຮັບຮອງ IB：International Baccalaureate, ກໍ່ສ້າງຊັບພະຍາກອນມະນຸດສາກົນທີ່ສາມາດເຮັດວຽກໄດ້ຢ່າງດີໃນສັງຄົມສາກົນ. ພ້ອມກັນນີ້ ປະຕິບັດການສະໜັບສະໜູນ ກິດຈະກຳການແລກປ່ຽນສາກົນ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບາຍ]**

- ການສົ່ງເສີມຂອງການສຶກສາທີ່ສາມາດຕອບຮັບການຫັນເປັນສາກົນ
- ການເຜີຍແຜ່ກິດຈະກຳຢູ່ໃນໂຮງຮຽນທີ່ໄດ້ຮັບຮອງ IB：International Baccalaureate
- ການສະໜັບສະໜູນ ການສ້າງຄວາມເຂົ້າໃຈສາກົນ / ກິດຈະກຳການສຳຜັດຕົວຈິງຂອງຊາວໜຸ່ມ
- ການປະຕິບັດການຝຶກອົບຮົມກ່ຽວກັບພາສາຕ່າງປະເທດ/ການເຮັດການຝຶກອົບຮົມກ່ຽວກັບພາສາຕ່າງປະເທດ ໃຫ້ດີຂຶ້ນ
- ການສົ່ງເສີມຂອງການຮຽນພົນລະເມືອງໂລກ（※）

（※）ຄຳສັບຂອງພົນລະເມືອງໂລກໝາຍຄວາມວ່າ ພວກຄົນທີ່ເລີ່ມຕົ້ນເຄື່ອນໄຫວຈາກສິ່ງທີ່ອ້ອມຂ້າງທີ່ສາມາດເຮັດເອງກໍໄດ້ ໂດຍການຄິດໃນຊີວິດປະຈຳວັນໃນນາມເປັນສະມາຊິກຜູ້ໜຶ່ງທີ່ອາໄສຢູ່ໂລກ ມຸ່ງໜ້າສູ່ການແກ້ໄຂບັນຫາຂະໜາດທົ່ວໂລກ ເຊັ່ນ ສັນຕິພາບ, ສິ່ງແວດລ້ອມ,ສິດທິມະນຸດ, ຄວາມຍາກຈົນ.

## ທິດທາງຂອງການປະຕິບັດນະໂຍບາຍ

## ເປົ້າໝາຍພື້ນຖານ 3 ການສົ່ງເສີມການເຮັດວຽກຂອງຊັບພະຍາກອນມະນຸດສາກົນ

### (13) ການສົ່ງເສີມການເຮັດວຽກຂອງຊັບພະຍາກອນມະນຸດຈາກຕ່າງປະເທດ

ພວກເຮົາຈັດ ປະຊຸມອະທິບາຍບໍລິສັດຮ່ວມກັນ ແລະ ຈັດສຳມະນາສະໜັບສະໜູນການຊອກວຽກ ເພື່ອ ຊ່ວຍການຊອກວຽກຂອງນັກສຶກສາຕ່າງປະເທດໃນແຂວງຄານາກາວາ ແລະ ຊຸກຍູ້ເຮັດໃຫ້ເຂົາເຈົ້າຈະເຮັດວຽກຢູ່ໃນແຂວງພວກເຮົາຕະຫລອດໄປ, ນອກຈາກນີ້ຍັງໃຊ້ຄວາມພະຍາຍາມການປັບປຸງລະບົບສະໜັບສະໜູນ ເພື່ອຊ່ວຍຊຸກຍູ້ໄດ້ຮັບຜ່ານສອບເສັງຄຸນະວຸດຕິຂອງພະຍາບານ ແລະ ນັກຊ່ວຍດູແລສະວັດດີການ ສຳລັບຄົນຕ່າງປະເທດທີ່ຢາກໄດ້ໃບຢັ້ງຢືນຄຸນວຸດທິຂອງພະຍາບານ ແລະ ນັກດູແລພະຍາບານສະວັດດີການ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບຍ]**

- ການສະໜັບສະໜູນນັກສຶກສາຕ່າງປະເທດເພື່ອມຸ່ງໜ້າສູ່ການຊອກວຽກບໍລິສັດພາຍໃນແຂວງຄານາກາວາ
- ການສົ່ງເສີມການສະໜັບສະໜູນ ຄົນຕ່າງປະເທດທີ່ຢາກເປັນພະຍາບານແລະນັກດູແລພະຍາບານສະວັດດີການ ຜ່ານສອບເສັງໃບຢັ້ງຢືນຄຸນວຸດທິ ພະຍາບານ ແລະ ນັກດູແລພະຍາບານສະວັດດີການ
- ການຮັບຈ້າງນັກສຶກສາຕ່າງປະເທດຂອງຫ້ອງການດູແລພະຍາບານ
- ການຮັບນັກສຶກສາຕ່າງປະເທດຂອງວິທະຍາໄລເຕັກໂນໂລຊີອຸດສາຫະກຳແຫ່ງແຂວງຄານາກາວາ

### (14) ການປັບປຸງສິ່ງແວດລ້ອມແຮງງານໃຫ້ດີຂຶ້ນສຳລັບຊັບພະຍາກອນມະນຸດຕ່າງປະເທດ

ເພື່ອ ເຮັດໃຫ້ຊັບພະຍາກອນມະນຸດຕ່າງປະເທດສາມາດເຮັດວຽກໄດ້ດ້ວຍບໍ່ມີຄວາມກັງວົນ, ພວກເຮົາປະຕິບັດການສະໜັບສະໜູນການເຮັດການຂໍຄຳປຶກສາໃຫ້ດີຂຶ້ນ/ການຫັນເປັນລະບົບຫລາຍພາສາໃຫ້ດີຂຶ້ນ ແລະ ເຜີຍແຜ່ແລະປູກຈິດສຳນຶກຂອງສິ່ງແວດລ້ອມທາງດ້ານແຮງງານທີ່ເໝາະສົມໃຫ້ບໍລິສັດທີ່ຮັບຈ້າງຊັບພະຍາກອນມະນຸດຕ່າງປະເທດ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບຍ]**

- ການເຮັດການຂໍຄຳປຶກສາໃຫ້ດີຂຶ້ນ / ການຫັນເປັນລະບົບຫລາຍພາສາ
- ການເຜີຍແຜ່ແລະປູກຈິດສຳນຶກບໍລິສັດ/ ການສະໜູນບໍລິສັດ

## ທິດທາງຂອງການປະຕິບັດນະໂຍບາຍ

## ເປົ້າໝາຍພື້ນຖານ 4 ການເຜີຍແຜ່ຂອງການບໍ່ໃຫ້ມີອາວຸດນິວເຄລຍ/ຈິດສຳນຶກສັນຕິພາບ

### (15) ການເຜີຍແຜ່ຂອງການບໍ່ໃຫ້ມີອາວຸດນິວເຄລຍ /ຈິດສຳນຶກສັນຕິພາບ

ສືບທອດຄວາມລ້ຳຄ່າຂອງສັນຕິພາບ, ຄວາມທຸກທໍລະມານຂອງສົງຄາມ ໃຫ້ລຸ້ນຕໍ່ໄປຢ່າງໝັ້ນຄົງ ເພື່ອສ້າງສັນຕິພາບ,ນອກຈາກນີ້ ຍັງ ເຜີຍແຜ່/ປູກຈິດສຳນຶກຄວາມໝາຍຂອງ "ການປະກາດເຂດປອດອາວຸດນິວເຄລຍ ຄານາກາວາ" ແລະພົວພັນຕິດຕໍ່ກັບ ອຳນາດການປົກຄອງທ້ອງຖິ່ນທີ່ປະກາດເຂດປອດອາວຸດນິວເຄລຍຂອງອຳນາດການປົກຄອງທ້ອງຖິ່ນໃນຄານາກາວາ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບຍ]**

- ການເຜີຍແຜ່ຂອງການປອດອາວຸດນິວເຄລຍ/ຈິດສຳນຶກສັນຕິພາບ



【ການປະກາດເຂດປອດອາວຸດນິວເຄລຍ ຄານາກາວາ】



【ຫ້ອງວາງສະແດງສັນຕິພາບສາກົນຂອງພິພິດທະພັນເມືອງໂລກຄານາ ຄານາກາວາ】

# ທິດທາງຂອງການປະຕິບັດນະໂຍບາຍ

# ເປົ້າໝາຍພື້ນຖານ 5 ການສົ່ງເສີມໃຫ້ການສະໜັບສະໜູນຂອງກິດຈະກຳສາກົນຂອງພົນລະເມືອງແຂວງ,ການສົ່ງເສີມການຮ່ວມມື/ການພົວພັນຕິດຕໍ່ກັນ

## (16) ການໃຫ້ການສະໜັບສະໜູນກິດຈະກຳສຂອງພົນລະເມືອງແຂວງ ແລະ ການຮ່ວມມື/ການພົວພັນຕິດຕໍ່ກັນ

ພວກເຮົາສະໜັບສະໜຸນກິດຈະກຳສາກົນຂອງພົນລະເມືອງແຂວງ/ສົ່ງເສີມກິດຈະກຳສາກົນຂອງພົນລະເມືອງແຂວງ, ເພື່ອເຮັດໃຫ້ກິດຈະກຳນີ້ ດຳເນີນໄປ ຢ່າງມີປະສິດທິຜົນ, ພວກເຮົາທາງຝ່າຍແຂວງຄານາກາວາ ມຸ່ງໜ້າສູ່ການສົ່ງເສີມເຮຮ່ວມມືກັນ/ພົວພັນຕິດຕໍ່ກັນ ກັບ (ມູນນິທິສາທາລະນະ)ມູນນິທິແລກປ່ຽນສາກົນຄານາກາວາ, NGO/NPO, ຫ້ອງວ່າການປົກຄອງເມືອງ,ບໍລິສັດ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ເປັນຕົ້ນ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບຍ]**

- ການສະໜັບສະໜຸນກິດຈະກຳສາກົນຂອງພົນລະເມືອງແຂວງ/ການສົ່ງເສີມກິດຈະກຳສາກົນຂອງພົນລະເມືອງແຂວງ
- ການພົວພັນຕິດຕໍ່ກັນກັບມູນນິທິແລກປ່ຽນສາກົນຄານາກາວາ(ມູນນິທິສາທາລະນະ)
- ການສົ່ງເສີມປະຕິບັດນະໂຍບາຍສາກົນໂດຍ ການຮ່ວມມື/ການພົວພັນຕິດຕໍ່ກັນ

## (17) ການສົ່ງເສີມຂອງມາດຕະການຕໍ່ຖານທັບ

ຄານາກາວາ ສົ່ງເສີມ ການຈັດໃຫ້ເປັນລະບຽບ/ການຫຍໍ້ລົງ ແລະ ການກັບຄືນ ຂອງ ຖານທັບອາເມລິກາໃນແຂວງຄານາກາວາ ໂດຍການພົວພັນຕິດຕໍ່ກັບອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.ນອກຈາກນີ້ ໂດຍພົວພັນຕິດຕໍ່ກັບອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຍັງສະເໜີຕໍ່ລັດຖະບານສູນກາງ ເພື່ອສ້າງການຍຶດໝັ້ນຂອງຄວາມປອດໄພ/ສະວັດດີກາຂອງພົນລະເມືອງບໍລິເວນຖານທັບ ແລະ ຮັກສາສິ່ງແວດລ້ອມການໃຊ້ຊີວິດຢ່າງດີ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບຍ]**

- ການສົ່ງເສີມ ການຈັດໃຫ້ເປັນລະບຽບ/ການຫຍໍ້ລົງ ແລະ ການກັບຄືນ ຂອງ ຖານທັບ
- ການສ້າງການຍຶດໝັ້ນຂອງຄວາມປອດໄພ/ສະວັດດີການຂອງພົນລະເມືອງບໍລິເວນຖານທັບແລະຮັກສາສິ່ງແວດລ້ອມການໃຊ້ຊີວິດຢ່າງດີ.
- ການສົ່ງເສີມການພົວພັນຕິດຕໍ່ກັບຖານທັບ

## (18) ການປ້ອງກັນບໍ່ໃຫ້ລືມບັນຫາການລັກພາຕົວ ແລະການສົ່ງເສີມສ້າງຄວາມເຂົ້າໃຈຂອງພົນລະເມືອງແຂວງ

ອີງຕາມ "ກົດໝາຍວ່າດ້ວຍການມາດຕະການບັນຫາການລັກພາຕົວ ແລະ ບັນຫາລະເມີດສິດທິມະນຸດໂດຍລັດຖະບານເກົາຫລີເໜືອ" (ຂໍ້ທີ96ກົດໝາຍປີ2006),ພວກເຮົາໃຊ້ຄວາມພະຍາຍາມປ້ອງກັນບໍ່ໃຫ້ລືມບັນຫາການລັກພາຕົວແລະການສົ່ງເສີມການສ້າງຄວາມເຂົ້າໃຈຂອງພົນລະເມືອງແຂວງ ໂດຍການພົວພັນຕິດຕໍ່ກັບປະເທດແລະຫ້ອງວ່າການປົກຄອງທ້ອງຖິ່ນຂັ້ນເມືອງ,ອົງການຈັດຕັ້ງສະໜັບສະໜຸນ.

**[ການແຜ່ຂະຫຍາຍອອກໄປຂອງການປະຕິບັດນະໂຍບຍ]**

- ການສົ່ງເສີມສ້າງຄວາມເຂົ້າໃຈຂອງພົນລະເມືອງແຂວງ ລວມທັງຜູ້ທີ່ຖືກສົງໄສວ່າເປັນຜູ້ຫາຍສາບສູນ
- ການພົວພັນຕິດຕໍ່ກັບຫ້ອງວ່າການປົກຄອງທ້ອງຖິ່ນຂັ້ນເມືອງ, ອົງການຈັດຕັ້ງທີ່ສະໜັບສະໜຸນເປັນຕົ້ນ ເພື່ອປ້ອງກັນບໍ່ໃຫ້ລືມບັນຫາການລັກພາຕົວ
- ການສົ່ງເສີມການສຶກສາເພື່ອສ້າງຄວາມເຂົ້າໃຈແລະຄວາມສົນໃຈຕໍ່ບັນຫາການລັກພາຕົວຢ່າງເລິກເຊິ່ງ
- ການເຄື່ອນໄຫວເພື່ອແກ້ໄຂບັນຫາການລັກພາຕົວ